ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------------------------

ສະພາແຫ່ງຊາດ ເລກທີ 07 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 09 ພະຈິກ 2005

# ກົດໝາຍ
# ວ່າດ້ວຍການແກ້ໄຂຄຳຮ້ອງທຸກ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ກຳນົດຫລັກການ, ລະບຽບການ, ມາດຕະການກ່ຽວກັບການຮ້ອງທຸກ ແລະ ການແກ້ໄຂຄຳຮ້ອງທຸກຂອງພົນລະເມືອງ, ການຈັດຕັ້ງ ໃຫ້ຖືກຕ້ອງຕາມລະບຽບກົດຫມາຍ ແນໃສ່ເສີມຂະຫຍາຍສິດປະຊາທິປະໄຕ ຂອງປະຊາຊົນ, ເພີ່ມທະວີນິຕິທຳຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ປົກປັກຮັກສາຜົນປະໂຫຍດຂອງລັດ, ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ, ເຮັດໃຫ້ສັງຄົມມີຄວາມສະຫງົບ, ຍຸຕິທຳ ແລະ ສີວິໄລ.

**ມາດຕາ 2. ຄຳຮ້ອງທຸກ**

ຄຳຮ້ອງທຸກ ແມ່ນເອກະສານຂອງພົນລະເມືອງ ຫລື ການຈັດຕັ້ງ ທີ່ຍື່ນຕໍ່ອົງການທີ່ກ່ຽວຂ້ອງ ເພື່ອພິຈາລະນາແກ້ໄຂກ່ຽວກັບການກະທຳ ຫລື ການຕົກລົງໃດໜຶ່ງຂອງການຈັດຕັ້ງ ຫລື ບຸກຄົນ ທີ່ຕົນເຫັນວ່າເປັນການລະເມີດລະບຽບກົດໝາຍ ແລະ ແຕະຕ້ອງເຖິງຜົນປະໂຫຍດຂອງລັດ, ລວມຫມູ່ ຫລື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ.

ຄຳຮ້ອງທຸກມີ ສາມ ປະເພດຄື:

- ຄຳຮ້ອງທຸກທີ່ຍື່ນຕໍ່ອົງການບໍລິຫານລັດ ເອີ້ນວ່າຄຳສະເໜີ ;
- ຄຳຮ້ອງທຸກທີ່ຍື່ນຕໍ່ອົງການສືບສວນ-ສອບສວນ, ອົງການໄອຍະການ ຫລື ສານ ເອີ້ນ ວ່າຄຳຮ້ອງຟ້ອງ;
- ຄຳຮ້ອງທຸກທີ່ຍື່ນຕໍ່ສະພາແຫ່ງຊາດ ເອີ້ນວ່າຄຳຮ້ອງຂໍຄວາມເປັນທຳ.

### ມາດຕາ 3. ການອະທິບາຍຄໍາສັບ

ສັບຕ່າງໆທີ່ໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ພົນລະເມືອງ ໝາຍເຖິງພົນລະເມືອງລາວ, ຊາວຕ່າງດ້າວ, ຄົນບໍ່ມີສັນຊາດ, ຊາວຕ່າງປະເທດ ທີ່ດໍາລົງຊີວິດຢູ່ ສປປລາວ;
2. ຜູ້ສະເໜີ ໝາຍເຖິງບຸກຄົນ ຫລືການຈັດຕັ້ງ ທີ່ໄດ້ຍື່ນຄໍາສະເໜີຂອງຕົນຕໍ່ການຈັດຕັ້ງທີ່ມີສິດ ແລະໜ້າທີ່ແກ້ໄຂທາງດ້ານບໍລິຫານ ຊຶ່ງຕົນເຫັນວ່າມີບຸກຄົນ ຫລື ການຈັດຕັ້ງບໍລິຫານລັດລະເມີດລະບຽບກົດໝາຍ ແລະ ແຕະຕ້ອງຜົນປະໂຫຍດຂອງລັດ, ລວມໝູ່ ຫລື ສິດ ແລະ ຜົນປະໂຫຍດອັນຊອບທໍາຂອງຕົນ;
3. ຜູ້ຖືກສະເໜີ ໝາຍເຖິງບຸກຄົນ ຫລື ການຈັດຕັ້ງ ທີ່ຖືກຜູ້ອື່ນສະເໜີຕໍ່ການຈັດຕັ້ງທີ່ມີສິດ ແລະ ໜ້າທີ່ແກ້ໄຂທາງດ້ານບໍລິຫານວ່າຕົນໄດ້ລະເມີດລະບຽບກົດໝາຍ ແລະ ແຕະຕ້ອງຜົນປະໂຫຍດຂອງລັດ, ລວມໝູ່ ຫລື ສິດ ແລະ ຜົນປະໂຫຍດອັນຊອບທໍາຂອງຜູ້ອື່ນ;
4. ຜູ້ຮ້ອງຟ້ອງໝາຍເຖິງບຸກຄົນ ຫລື ການຈັດຕັ້ງທີ່ໄດ້ຍື່ນຄໍາຮ້ອງຟ້ອງ ຂອງຕົນຕໍ່ອົງການທີ່ມີສິດ ແລະ ໜ້າທີ່ດໍາເນີນຄະດີ ເພື່ອປົກປ້ອງຜົນປະໂຫຍດຂອງລັດ, ລວມໝູ່ ຫລື ສິດ ແລະ ຜົນປະໂຫຍດອັນຊອບທໍາຂອງຕົນທີ່ຖືກລະເມີດ;
5. ຜູ້ຖືກຮ້ອງຟ້ອງໝາຍເຖິງບຸກຄົນ ຫລື ການຈັດຕັ້ງ ທີ່ຖືກຜູ້ອື່ນຮ້ອງຟ້ອງຕໍ່ການຈັດຕັ້ງທີ່ມີສິດ ແລະໜ້າທີ່ດໍາເນີນຄະດີ ວ່າຕົນໄດ້ລະເມີດ ລະບຽບກົດໝາຍ ແລະ ແຕະຕ້ອງຜົນປະໂຫຍດຂອງລັດ, ລວມໝູ່ ຫລືສິດ ແລະ ຜົນປະໂຫຍດອັນຊອບທໍາຂອງຜູ້ອື່ນ;
6. ຜູ້ຮ້ອງຂໍຄວາມເປັນທໍາ ໝາຍເຖິງບຸກຄົນ ຫລື ການຈັດຕັ້ງ ທີ່ຍື່ນຄໍາຮ້ອງຂໍຄວາມເປັນທໍາຂອງຕົນຕໍ່ສະພາແຫ່ງຊາດ ເພື່ອປົກປ້ອງຜົນປະໂຫຍດຂອງລັດ, ລວມໝູ່ ຫລື ສິດ ແລະ ຜົນປະໂຫຍດອັນຊອບທໍາຂອງຕົນ ຊຶ່ງຕົນເຫັນວ່າຂໍ້ຕົກລົງຂອງອົງການບໍລິຫານລັດ ຫລື ຄໍາຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນ ຍັງບໍ່ທັນໃຫ້ຄວາມເປັນທໍາແກ່ຕົນ.

### ມາດຕາ 4. ສິດຂອງພົນລະເມືອງ ແລະການຈັດຕັ້ງ

ພົນລະເມືອງ ແລະການຈັດຕັ້ງມີສິດຮ້ອງທຸກ ຕໍ່ການຈັດຕັ້ງທີ່ມີສິດ ແລະ ໜ້າທີ່ ທີ່ກ່ຽວຂ້ອງ ເພື່ອປົກປ້ອງຜົນປະໂຫຍດຂອງລັດ, ລວມໝູ່ ຫລື ສິດ ແລະ ຜົນປະໂຫຍດອັນຊອບທໍາຂອງຕົນ ທີ່ຖືກລະເມີດ ຫລື ຖືກໂຕ້ແຍ່ງຈາກບຸກຄົນ ຫລື ການຈັດຕັ້ງອື່ນ.

ສໍາລັບບຸກຄົນ ຫລື ການຈັດຕັ້ງຕ່າງປະເທດ ກໍມີສິດຮ້ອງທຸກຕາມທີ່ກົດໝາຍສະບັບນີ້ໄດ້ກໍານົດໄວ້ ເວັ້ນເສຍແຕ່ສັນຍາ ຫລື ສົນທິສັນຍາສາກົນທີ່ ສປປລາວ ໄດ້ເຊັນ ຫລື ເຂົ້າຮ່ວມເປັນພາຄີຫາກໄດ້ກໍານົດໄວ້ຢ່າງອື່ນ.

**ມາດຕາ 5. ນະໂຍບາຍ ກ່ຽວກັບຄຳຮ້ອງທຸກ**

ລັດອຳນວຍຄວາມສະດວກໃຫ້ພົນລະເມືອງ ແລະການຈັດຕັ້ງປະຕິບັດສິດຮ້ອງທຸກ ແນໃສ່ປົກປ້ອງຜົນປະໂຫຍດຂອງລັດ, ລວມໝູ່ ຫລື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ ເພື່ອເຮັດໃຫ້ກົງຈັກລັດ, ພະນັກງານມີຄວາມໂປ່ງໃສ ແລະ ມີປະສິດທິພາບໃນການປະຕິບັດໜ້າທີ່ຂອງຕົນ, ກຳຈັດ ແລະ ສະກັດກັ້ນປະກົດການຫຍໍ້ທໍ້ຕ່າງໆຢູ່ໃນສັງຄົມ.

ບຸກຄົນ ຫລື ການຈັດຕັ້ງຕ້ອງກວດກາ, ພິຈາລະນາຢ່າງຖີ່ຖ້ວນ ໃນການ ປະຕິບັດສິດ ແລະຫນ້າທີ່ຂອງຕົນ ຖ້າເຫັນວ່າສິ່ງໃດຫາກບໍ່ຖືກຕ້ອງຕາມລະບຽບກົດຫມາຍ, ກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫລື ບຸກຄົນອື່ນແລ້ວ ກໍຕ້ອງປັບປຸງແປງແກ້ໄຂຢ່າງທັນການ ເພື່ອຈຳກັດບໍ່ໃຫ້ມີຄຳຮ້ອງທຸກເກີດຂຶ້ນ.

ລັດສົ່ງເສີມໃຫ້ມີການໄກ່ເກ່ຍຂໍ້ຂັດແຍ່ງໃນໝູ່ປະຊາຊົນ ຕາມລະບຽບກົດໝາຍກ່ອນຈະມີການຮ້ອງທຸກຕໍ່ການຈັດຕັ້ງທີ່ມີສິດ ແລະ ໜ້າທີ່ທີ່ກ່ຽວຂ້ອງພິຈາລະນາແກ້ໄຂ.

**ມາດຕາ 6. ຫລັກການແກ້ໄຂຄຳຮ້ອງທຸກ**

ການຮ້ອງທຸກ ຕ້ອງດຳເນີນໄປຕາມຫລັກການພື້ນຕໍ່ ດັ່ງນີ້:

1. ການຮ້ອງທຸກ ຕ້ອງດຳເນີນໄປ ຕາມລະບຽບກົດຫມາຍ;
2. ການຈັດຕັ້ງທີ່ມີສິດ ແລະຫນ້າທີ່ ທີ່ກ່ຽວຂ້ອງ ຕ້ອງຮັບຕ້ອນຜູ້ຮ້ອງທຸກຕາມຄວາມເໝາະສົມ ແລະ ພິຈາລະນາແກ້ໄຂຄຳຮ້ອງທຸກໃຫ້ທັນເວລາ;
3. ການແກ້ໄຂຄຳຮ້ອງທຸກຕ້ອງຄົ້ນຄວ້າຢ່າງຮອບດ້ານ, ຄົບຖ້ວນ, ພາວະວິໃສ, ແລະ ຖືກຕ້ອງຕາມລະບຽບກົດຫມາຍ;
4. ອົງການຈັດຕັ້ງ ທີ່ຮັບຜິດຊອບແກ້ໄຂຄຳຮ້ອງທຸກ ຕ້ອງແຈ້ງຜົນຂອງການແກ້ໄຂໃຫ້ຜູ້ຮ້ອງທຸກຊາບຢ່າງເປັນລາຍລັກອັກສອນ;
5. ຜູ້ຖືກຮ້ອງທຸກ ແລະ ຜູ້ກ່ຽວຂ້ອງອື່ນໆ ຕ້ອງໃຫ້ການຮ່ວມມື ແລະ ສ້າງເງື່ອນໄຂສະດວກໃຫ້ແກ່ການແກ້ໄຂຄຳຮ້ອງທຸກ;
6. ການແກ້ໄຂຄຳຮ້ອງທຸກທາງດ້ານບໍລິຫານ ໃຫ້ດຳເນີນໄດ້ສອງຂັ້ນ. ຖ້າຜູ້ຮ້ອງທຸກຍັງບໍ່ພໍໃຈກໍໃຫ້ຮ້ອງຟ້ອງຕໍ່ສານ ຫລື ຮ້ອງຂໍຄວາມເປັນທຳຕໍ່ສະພາແຫ່ງຊາດ.

**ມາດຕາ 7. ການຮ່ວມມືສາກົນ**

ລັດສົ່ງເສີມໃຫ້ມີການຮ່ວມມືກັບສາກົນ ໃນວຽກງານແກ້ໄຂຄຳຮ້ອງທຸກ ໂດຍສະເພາະການຍົກລະດັບພະນັກງານ ແລະ ການແລກປ່ຽນບົດຮຽນກັບປະເທດອື່ນໆ ເພື່ອເຮັດໃຫ້ການແກ້ໄຂຄຳຮ້ອງທຸກ ຢູ່ ສປປລາວ ມີປະສິດທິຜົນດີຂຶ້ນ.

## ພາກທີ II

## ລະບຽບການກ່ຽວກັບການຍື່ນຄຳຮ້ອງທຸກ

**ມາດຕາ 8. ການຍື່ນຄຳຮ້ອງທຸກ**

ການຍື່ນຄຳຮ້ອງທຸກ ຕ້ອງຍື່ນຕໍ່ການຈັດຕັ້ງທີ່ມີສິດ ແລະ ໜ້າທີ່ທີ່ກ່ຽວຂ້ອງໃນການພິຈາລະນາແກ້ໄຂເທົ່ານັ້ນ.

**ມາດຕາ 9. ສິດ ແລະພັນທະຂອງຜູ້ຍື່ນຄຳຮ້ອງທຸກ**

ຜູ້ຍື່ນຄຳຮ້ອງທຸກມີສິດຕົ້ນຕໍ ດັ່ງນີ້:

- ຍື່ນຄຳຮ້ອງທຸກໂດຍຕົນເອງ ຫລື ໂດຍຜູ້ຕາງໜ້າ ທີ່ຖືກຕ້ອງຕາມກົດໝາຍ;
- ຮັບຊາບຜົນຂອງການແກ້ໄຂຄຳຮ້ອງທຸກ ຢ່າງເປັນລາຍລັກອັກສອນຈາກການຈັດຕັ້ງທີ່ກ່ຽວຂ້ອງ;
- ໄດ້ຮັບການປົກປ້ອງຈາກການນາບຂູ່, ປາບປາມ ແລະ ໄດ້ຮັບການປົກປິດເປັນຄວາມລັບກ່ຽວກັບຊື່ ແລະນາມສະກຸນ, ທີ່ຢູ່, ນາມປາກກາຂອງຕົນ ຕາມການຮ້ອງຂໍ;
- ໄດ້ຮັບການຟື້ນຟູຄືນກ່ຽວກັບສິດຂອງຕົນທີ່ຖືກລະເມີດ ແລະ ໄດ້ຮັບການໃຊ້ແທນຄ່າເສຍຫາຍຈາກຜູ້ລະເມີດຕາມລະບຽບກົດໝາຍ;
- ຖອນຄຳຮ້ອງທຸກຂອງຕົນ ຢູ່ໃນທຸກຂັ້ນຕອນ.

ຜູ້ຮ້ອງທຸກ ມີພັນທະຕົ້ນຕໍດັ່ງນີ້:

- ແຈ້ງຊື່, ນາມສະກຸນ, ອາຍຸ, ອາຊີບ ແລະ ທີ່ຢູ່ຂອງຕົນໃຫ້ຊັດເຈນ;
- ຍົກບັນຫາກ່ຽວກັບຄຳຮ້ອງທຸກໃຫ້ຈະແຈ້ງ, ຖືກຕ້ອງຕາມຄວາມຈິງພ້ອມທັງສະໜອງຂໍ້ມູນ, ຫລັກຖານ ໃຫ້ແກ່ການຈັດຕັ້ງທີ່ແກ້ໄຂຄຳຮ້ອງທຸກຢ່າງຄົບຖ້ວນ ແລະ ທັນເວລາ;
- ຮັບຜິດຊອບຕໍ່ໜ້າກົດໝາຍ ກ່ຽວກັບເນື້ອໃນຄຳຮ້ອງທຸກຂອງຕົນ ແລະ ຂໍ້ມູນ, ຫລັກຖານ ທີ່ນຳມາສະເໜີຕໍ່ການຈັດຕັ້ງທີ່ກ່ຽວຂ້ອງ;
- ປະຕິບັດຢ່າງເຂັ້ມງວດຄຳຕົກລົງກ່ຽວກັບການແກ້ໄຂຄຳຮ້ອງທຸກທີ່ມີຜົນສັກສິດທາງດ້ານກົດໝາຍແລ້ວ.

**ມາດຕາ 10. ສິດ ແລະ ພັນທະຂອງຜູ້ຖືກຮ້ອງທຸກ**

ຜູ້ຖືກຮ້ອງທຸກມີສິດ ຕົ້ນຕໍ ດັ່ງນີ້:

- ຮັບຊາບກ່ຽວກັບເນື້ອໃນຄຳຮ້ອງທຸກ;
- ປົກປ້ອງຕົນເອງ ດ້ວຍການນຳເອົາຂໍ້ມູນ, ຫລັກຖານມາຢັ້ງຢືນ;
- ໄດ້ຮັບການຟື້ນຟູກຽດສັກສີ ແລະ ຜົນປະໂຫຍດອື່ນຄືນທີ່ຖືກເສຍຫາຍຍ້ອນການຮ້ອງທຸກທີ່ບໍ່ມີມູນຄວາມຈິງ ຕາມລະບຽບກົດຫມາຍ;

- ສະເໜີໃຫ້ການຈັດຕັ້ງທີ່ມີສິດ ແລະ ໜ້າທີ່ທີ່ກ່ຽວຂ້ອງໃຊ້ມາດຕະການຕໍ່ຜູ້ຮ້ອງທຸກທີ່ບໍ່ມີມູນຄວາມຈິງນັ້ນ ຕາມລະບຽບກົດໝາຍ .

ຜູ້ຖືກຮ້ອງທຸກ ມີພັນທະຕົ້ນຕໍ ດັ່ງນີ້:

- ຊີ້ແຈງອະທິບາຍ ກ່ຽວກັບບັນຫາທີ່ຖືກຮ້ອງທຸກ ແລະສະໜອງຂໍ້ມູນ, ຫລັກຖານໃຫ້ແກ່ການຈັດຕັ້ງທີ່ກ່ຽວຂ້ອງ;
- ປະຕິບັດຢ່າງເຂັ້ມງວດຄໍາຕັດສິນກ່ຽວກັບການແກ້ໄຂຄໍາຮ້ອງທຸກທີ່ມີຜົນສັກສິດທາງດ້ານກົດໝາຍແລ້ວ.

## ມາດຕາ 11. ກໍານົດເວລາ ແລະສະຖານທີ່ຍື່ນຄໍາຮ້ອງທຸກ

ການຍື່ນຄໍາຮ້ອງທຸກຕໍ່ການຈັດຕັ້ງທີ່ກ່ຽວຂ້ອງນັ້ນ ຕ້ອງປະຕິບັດຕາມໂມງເວລາ ແລະສະຖານທີ່ ທີ່ທາງການໄດ້ກໍານົດໄວ້.

## ມາດຕາ 12. ເນື້ອໃນຂອງຄໍາຮ້ອງທຸກ

ຄໍາຮ້ອງທຸກທີ່ເປັນລາຍລັກອັກສອນ ຕ້ອງມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຊື່ ແລະສະຖານທີ່ຂອງການຈັດຕັ້ງທີ່ກ່ຽວຂ້ອງ ;
2. ຊື່, ນາມສະກຸນ, ອາຍຸ, ອາຊີບ, ທີ່ຢູ່ຂອງຜູ້ຮ້ອງທຸກ ແລະ ຜູ້ຖືກຮ້ອງທຸກ;
3. ບັນຫາທີ່ຢາກໃຫ້ແກ້ໄຂ, ຫລັກຖານອ້າງອີງ;
4. ສະຖານທີ່, ວັນທີ, ລາຍເຊັນ ແລະ ລາຍໂປ້ມືຂອງຜູ້ຮ້ອງທຸກ ຫລື ຜູ້ຕາງໜ້າທີ່ຖືກຕ້ອງຕາມກົດໝາຍ.

   ໃນກໍລະນີຜູ້ຮ້ອງທຸກໄປລາຍງານ ຫລື ແຈ້ງຄວາມໂດຍປາກເປົ່າ ຕໍ່ການຈັດຕັ້ງທີ່ກ່ຽວຂ້ອງນັ້ນ ຜູ້ຮັບການລາຍງານ ຫລື ຮັບແຈ້ງຄວາມ ຕ້ອງເຮັດບົດບັນທຶກເປັນລາຍລັກອັກສອນ ຕາມເນື້ອໃນທີ່ໄດ້ກ່າວໄວ້ໃນວັກເທິງຂອງມາດຕານີ້.

## ມາດຕາ 13. ເງື່ອນໄຂຮັບຄໍາຮ້ອງທຸກ

ຄໍາຮ້ອງທຸກຈະຮັບມາພິຈາລະນາໄດ້ ກໍຕໍ່ເມື່ອມີເງື່ອນໄຂ ດັ່ງນີ້:

1. ຕ້ອງມີຊື່, ທີ່ຢູ່, ລາຍເຊັນ ແລະ ລາຍໂປ້ມື ຂອງຜູ້ຮ້ອງທຸກເອງ ຫລື ຂອງຜູ້ຕາງໜ້າທີ່ຖືກຕ້ອງຕາມກົດໝາຍ;
2. ຜູ້ຮ້ອງທຸກຕ້ອງມີອາຍຸແຕ່ 18 ປີຂຶ້ນໄປ ແລະ ບໍ່ເປັນບ້າເສຍຈິດ;
3. ຄໍາຮ້ອງທຸກ ທີ່ຍັງບໍ່ທັນມີການຈັດຕັ້ງໃດພິຈາລະນາແກ້ໄຂເທື່ອ ຫລື ແກ້ໄຂແລ້ວແຕ່ຜູ້ຮ້ອງທຸກຍັງບໍ່ພໍໃຈ;
4. ຄໍາຮ້ອງທຸກທີ່ເປັນຄໍາຮ້ອງຂໍຄວາມເປັນທໍານັ້ນ ຕ້ອງໄດ້ຜ່ານການແກ້ໄຂທາງດ້ານບໍລິຫານລັດສິ້ນສຸດເສຍກ່ອນ ຫລື ຖ້າເປັນຄໍາຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວກໍຕ້ອງມີຫລັກຖານໃໝ່;
5. ຄໍາຮ້ອງທຸກ ຕ້ອງເຮັດເປັນພາສາລາວ ທີ່ສາມາດອ່ານ ແລະເຂົ້າໃຈເນື້ອໃນໄດ້.

# ພາກທີ III
# ການແກ້ໄຂຄຳຮ້ອງທຸກ

## ໝວດທີ 1
## ອົງການແກ້ໄຂຄຳຮ້ອງທຸກ

**ມາດຕາ 14 . ອົງການແກ້ໄຂຄຳຮ້ອງທຸກ**

ອົງການແກ້ໄຂຄຳຮ້ອງທຸກ ມີດັ່ງນີ້:

1. ອົງການບໍລິຫານລັດ ຮັບ ແລະພິຈາລະນາແກ້ໄຂຄຳສະເໜີ ;
2. ສານ, ອົງການໄອຍະການ, ອົງການສືບສວນ- ສອບສວນ ຮັບ ແລະ ພິຈາລະນາແກ້ໄຂຄຳຮ້ອງຟ້ອງ;
3. ສະພາແຫ່ງຊາດຮັບ ແລະ ພິຈາລະນາແກ້ໄຂຄຳຮ້ອງຂໍຄວາມເປັນທຳ .

**ມາດຕາ 15. ສິດ ແລະພັນທະຂອງອົງການແກ້ໄຂຄຳຮ້ອງທຸກ**

ອົງການແກ້ໄຂຄຳຮ້ອງທຸກມີສິດຕົ້ນຕໍ ດັ່ງລຸ່ມນີ້:

- ຮຽກ, ເຊີນຜູ້ຮ້ອງທຸກ, ຜູ້ຖືກຮ້ອງທຸກ, ບຸກຄົນ ຫລືການຈັດຕັ້ງອື່ນທີ່ກ່ຽວຂ້ອງ ມາສອບຖາມ ຫລືໃຫ້ ຄວາມກະຈ່າງແຈ້ງ ກ່ຽວກັບບັນຫາໃດໜຶ່ງ;
- ທວງເອົາເອກະສານ, ຂໍ້ມູນ, ຫລັກຖານ ຈາກບຸກຄົນ ຫລືການຈັດຕັ້ງ ທີ່ກ່ຽວຂ້ອງ;
- ອອກຄຳຕົກລົງ ກ່ຽວກັບການແກ້ໄຂຄຳຮ້ອງທຸກ.

ອົງການແກ້ໄຂຄຳຮ້ອງທຸກມີພັນທະຕົ້ນຕໍ ດັ່ງລຸ່ມນີ້:

- ແກ້ໄຂຄຳຮ້ອງທຸກໃຫ້ທັນເວລາ, ຖືກຕ້ອງຕາມລະບຽບກົດໝາຍ;
- ໄກ່ເກ່ຍຄູ່ກໍລະນີໃຫ້ມີການປະນີປະນອມກັນ ໃນເມື່ອມີເງື່ອນໄຂ;
- ແຈ້ງຜົນຂອງການແກ້ໄຂໃຫ້ແກ່ຜູ້ຮ້ອງທຸກ ແລະ ຜູ້ຖືກຮ້ອງທຸກຊາບ;
- ສົ່ງສຳນວນເອກະສານໄປໃຫ້ການຈັດຕັ້ງທີ່ກ່ຽວຂ້ອງ ພິຈາລະນາແກ້ໄຂ ໃນກໍລະນີທີ່ບໍ່ແມ່ນສິດ ແລະ ໜ້າທີ່ຂອງຕົນ.

## ໝວດທີ 2
## ການແກ້ໄຂຄຳສະເໜີ

**ມາດຕາ 16. ຄຳສະເໜີ**

ຄຳສະເໜີຕາມກົດໝາຍສະບັບນີ້ ແມ່ນເອກະສານທີ່ພົນລະເມືອງ ຫລື ການຈັດຕັ້ງ ຍື່ນຕໍ່ອົງການບໍລິຫານລັດທີ່ກ່ຽວຂ້ອງ ເພື່ອພິຈາລະນາແກ້ໄຂກ່ຽວກັບການກະທຳ ຫລື ການຕົກລົງໃດໜຶ່ງຂອງບຸກຄົນ ຫລື ການຈັດຕັ້ງບໍລິຫານລັດ ທີ່ຕົນເຫັນວ່າລະເມີດລະບຽບກົດໝາຍ ແລະແຕະຕ້ອງເຖິງຜົນປະໂຫຍດຂອງລັດ, ລວມໝູ່ ຫລື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ.

### ມາດຕາ 17. ອົງການແກ້ໄຂຄຳສະເໜີ

ອົງການແກ້ໄຂຄຳສະເໜີ ມີດັ່ງນີ້:

- ລັດຖະບານ;
- ກະຊວງ ແລະອົງການທຽບເທົ່າກະຊວງ;
- ອົງການປົກຄອງຂັ້ນແຂວງ;
- ອົງການປົກຄອງຂັ້ນເມືອງ;
- ອົງການປົກຄອງບ້ານ.

ສຳລັບສິດ ແລະ ໜ້າທີ່ລະອຽດຂອງອົງການແກ້ໄຂຄຳສະເໜີນັ້ນ ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 18. ຂັ້ນຕອນການແກ້ໄຂຄຳສະເໜີ

ການແກ້ໄຂຄຳສະເໜີ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ຄົ້ນຄວ້າ, ພິຈາລະນາຄຳສະເໜີ ແລະເກັບກຳຂໍ້ມູນ, ຫລັກຖານເພີ່ມເຕີມ ຖ້າເຫັນວ່າມີຄວາມຈຳເປັນ;
2. ອອກຂໍ້ຕົກລົງ ກ່ຽວກັບການແກ້ໄຂຄຳສະເໜີ;
3. ແຈ້ງຜົນຂອງການແກ້ໄຂໃຫ້ຜູ້ສະເໜີ ແລະຜູ້ຖືກສະເໜີຊາບ;
4. ຈັດຕັ້ງປະຕິບັດຂໍ້ຕົກລົງກ່ຽວກັບການແກ້ໄຂຄຳສະເໜີ ທີ່ມີຜົນສັກສິດທາງດ້ານກົດໝາຍແລ້ວ.

ໃນກໍລະນີທີ່ຜູ້ສະເໜີ ຫລື ຜູ້ຖືກສະເໜີ ຫາກເຫັນວ່າຂໍ້ຕົກລົງນັ້ນ ຕົນຍັງບໍ່ໄດ້ຮັບຄວາມເປັນທຳ ກໍມີສິດສະເໜີຂຶ້ນຫາອົງການບໍລິຫານລັດຂັ້ນເທິງຖັດນັ້ນ ພິຈາລະນາແກ້ໄຂ.

ຖ້າເຫັນວ່າຂໍ້ຕົກລົງຂອງອົງການບໍລິຫານລັດຂັ້ນເທິງຖັດນັ້ນ ຫາກຍັງບໍ່ທັນໃຫ້ຄວາມເປັນທຳແກ່ຕົນອີກ ຜູ້ສະເໜີ ຫລື ຜູ້ຖືກສະເໜີ ມີສິດຮ້ອງຟ້ອງຕໍ່ສານ ຫລື ຮ້ອງຂໍຄວາມເປັນທຳຕໍ່ສະພາແຫ່ງຊາດ.

### ມາດຕາ 19. ກຳນົດເວລາໃນການຍື່ນ ແລະ ການແກ້ໄຂຄຳສະເໜີ

ກຳນົດເວລາ ໃນການຍື່ນຄຳສະເໜີຕໍ່ອົງການບໍລິຫານລັດ ຕ້ອງດຳເນີນພາຍໃນ ສາມ ປີ ນັບແຕ່ວັນທີ່ຖືກລະເມີດເປັນຕົ້ນໄປ.

ການແກ້ໄຂຄຳສະເໜີ ຕ້ອງພິຈາລະນາພາຍໃນກຳນົດ ຊາວ ວັນ ນັບແຕ່ວັນໄດ້ຮັບຄຳສະເໜີເປັນຕົ້ນໄປ.

ໃນກໍລະນີຄຳສະເໜີບໍ່ໄດ້ຮັບການພິຈາລະນາແກ້ໄຂຕາມກຳນົດເວລາ ຜູ້ສະເໜີມີສິດຍື່ນຄຳສະເໜີດັ່ງກ່າວຕໍ່ຂັ້ນເທິງຖັດນັ້ນ. ຖ້າຫາກຍັງບໍ່ໄດ້ຮັບພິຈາລະນາແກ້ໄຂຕາມກຳນົດເວລາອີກແລ້ວ ຜູ້ສະເໜີມີສິດຮ້ອງຟ້ອງຕໍ່ສານ ຫລື ຮ້ອງຂໍຄວາມເປັນທຳຕໍ່ສະພາແຫ່ງຊາດ.

### ມາດຕາ 20. ຜົນສັກສິດຂອງຂໍ້ຕົກລົງ

ຂໍ້ຕົກລົງກ່ຽວກັບການແກ້ໄຂຄຳສະເໜີ ທີ່ມີຜົນສັກສິດທາງດ້ານກົດໜມາຍມີດັ່ງນີ້:

- ຂໍ້ຕົກລົງຂອງອົງການບໍລິຫານລັດທີ່ມີສິດ ແລະ ໜ້າທີ່ແກ້ໄຂເປັນຂັ້ນທຳອິດ ຊຶ່ງຜູ້ສະເໜີ ແລະ ຜູ້ຖືກສະເໜີນັ້ນ ເຫັນດີປະຕິບັດ;
- ຂໍ້ຕົກລົງຂອງອົງການບໍລິຫານລັດ ທີ່ມີສິດ ແລະ ໜ້າທີ່ແກ້ໄຂເປັນຂັ້ນທີ່ສອງ ຊຶ່ງເປັນຂັ້ນສຸດທ້າຍ ແລະ ຜູ້ສະເໜີ ຫລື ຜູ້ຖືກສະເໜີບໍ່ຮ້ອງຟ້ອງຕໍ່ສານ ຫລື ບໍ່ຮ້ອງຂໍຄວາມເປັນທຳຕໍ່ສະພາແຫ່ງຊາດ.

ຂໍ້ຕົກລົງທີ່ມີຜົນສັກສິດທາງດ້ານກົດໝາຍນັ້ນ ພະນັກງານທີ່ມີໜ້າທີ່ຮັບຜິດຊອບ ຕ້ອງນຳໄປຈັດຕັ້ງປະຕິບັດຢ່າງທັນການ ແລະ ຖືກຕ້ອງຕາມຂໍ້ຕົກລົງດັ່ງກ່າວ; ບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງຕ້ອງປະຕິບັດຢ່າງເຂັ້ມງວດ.

## ໝວດທີ 3
## ການແກ້ໄຂຄຳຮ້ອງຟ້ອງ

### ມາດຕາ 21. ຄຳຮ້ອງຟ້ອງ

ຄຳຮ້ອງຟ້ອງ ແມ່ນເອກະສານທີ່ພົນລະເມືອງ ຫລື ການຈັດຕັ້ງ ຍື່ນຕໍ່ອົງການສືບສວນ-ສອບສວນ, ອົງການໄອຍະການ ຫລື ສານ ເພື່ອພິຈາລະນາແກ້ໄຂ ກ່ຽວກັບການກະທຳ ຫລື ການຕົກລົງໃດໜຶ່ງຂອງບຸກຄົນ ຫລື ການຈັດຕັ້ງທີ່ຕົນ ເຫັນວ່າລະເມີດລະບຽບກົດໝາຍ ແລະ ແຕະຕ້ອງເຖິງຜົນປະໂຫຍດຂອງລັດ, ລວມໝູ່ ຫລືສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ.

### ມາດຕາ 22. ຂັ້ນຕອນການແກ້ໄຂຄຳຮ້ອງຟ້ອງ

ການແກ້ໄຂຄຳຮ້ອງຟ້ອງ ໃຫ້ປະຕິບັດຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ແລະກົດໜມາຍວ່າດ້ວຍການດຳເນີນຄະດີອາຍາ.

## ໝວດທີ 4
## ການແກ້ໄຂຄຳຮ້ອງຂໍຄວາມເປັນທຳ

**ມາດຕາ 23. ຄຳຮ້ອງຂໍຄວາມເປັນທຳ**

ຄຳຮ້ອງຂໍຄວາມເປັນທຳ ແມ່ນເອກະສານທີ່ພົນລະເມືອງ ຫລື ການຈັດຕັ້ງ ຍື່ນຕໍ່ສະພາແຫ່ງຊາດ ເພື່ອພິຈາລະນາຄືນຜົນຂອງການແກ້ໄຂຄຳສະເໜີ ໂດຍອົງການບໍລິຫານລັດ, ການແກ້ໄຂຄຳຮ້ອງຟ້ອງ ໂດຍອົງການໄອຍະການ ຫລື ສານ ທີ່ມີຜົນສັກສິດທາງດ້ານກົດໝາຍແລ້ວ ຊຶ່ງຕົນເຫັນວ່າການແກ້ໄຂນັ້ນ ຍັງບໍ່ທັນມີຄວາມເປັນທຳເທື່ອ.

**ມາດຕາ 24. ອົງການແກ້ໄຂຄຳຮ້ອງຂໍຄວາມເປັນທຳ**

ອົງການແກ້ໄຂຄຳຮ້ອງຂໍຄວາມເປັນທຳ ມີດັ່ງນີ້:

- ຄະນະປະຈຳສະພາແຫ່ງຊາດ;
- ຄະນະສະມາຊິກສະພາແຫ່ງຊາດ ປະຈຳແຕ່ລະເຂດເລືອກຕັ້ງ.

ສຳລັບສິດ ແລະ ໜ້າທີ່ຂອງອົງການແກ້ໄຂຄຳຮ້ອງຂໍຄວາມເປັນທຳ ໄດ້ກຳນົດໄວ້ ໃນລະບຽບການຕ່າງຫາກ.

**ມາດຕາ 25. ຂັ້ນຕອນການແກ້ໄຂຄຳຮ້ອງຂໍຄວາມເປັນທຳ**

ການແກ້ໄຂຄຳຮ້ອງຂໍຄວາມເປັນທຳ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ຄົ້ນຄວ້າ, ພິຈາລະນາຄຳຮ້ອງຂໍຄວາມເປັນທຳ ແລະ ລວບລວມຂໍ້ມູນ, ຫລັກຖານເພີ່ມເຕີມ ຖ້າເຫັນວ່າມີຄວາມຈຳເປັນ;
2. ອອກຂໍ້ຕົກລົງ ກ່ຽວກັບການແກ້ໄຂຄຳຮ້ອງຂໍຄວາມເປັນທຳ;
3. ແຈ້ງຜົນຂອງການແກ້ໄຂ ໃຫ້ຜູ້ຮ້ອງຂໍຄວາມເປັນທຳ ແລະ ພາກສ່ວນກ່ຽວຂ້ອງຊາບ ເພື່ອຈັດຕັ້ງປະຕິບັດ;
4. ຕິດຕາມກວດກາ ການຈັດຕັ້ງປະຕິບັດຂໍ້ຕົກລົງດັ່ງກ່າວ.

ໃນກໍລະນີທີ່ຜູ້ຮ້ອງຂໍຄວາມເປັນທຳ ຫາກບໍ່ເຫັນດີນຳຂໍ້ຕົກລົງຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງນັ້ນແລ້ວ ກໍມີສິດສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາແກ້ໄຂ ເປັນຂັ້ນສຸດທ້າຍ.

**ມາດຕາ 26. ຂໍ້ຕົກລົງແກ້ໄຂຄຳຮ້ອງຂໍຄວາມເປັນທຳ**

ຂໍ້ຕົກລົງແກ້ໄຂຄຳຮ້ອງຂໍຄວາມເປັນທຳ ມີດັ່ງນີ້:

- ຕົກລົງຢັ້ງຢືນເອົາຕາມຂໍ້ຕົກລົງຂອງອົງການບໍລິຫານລັດ ຫລືຄຳຕັດສິນຂອງສານ;
- ຕົກລົງໃຫ້ອົງການບໍລິຫານລັດ, ອົງການໄອຍະການ ຫລື ສານ ພິຈາລະນາຄືນໃໝ່.

**ມາດຕາ 27. ກຳນົດເວລາໃນການຍື່ນ ແລະແກ້ໄຂຄຳຮ້ອງຂໍຄວາມເປັນທຳ.**

ກຳນົດເວລາ ໃນການຍື່ນຄຳຮ້ອງຂໍຄວາມເປັນທຳຕໍ່ສະພາແຫ່ງຊາດ ຕ້ອງດຳເນີນພາຍໃນຫົກສິບວັນ ນັບແຕ່ວັນທີ່ໄດ້ຮັບຊາບຂໍ້ຕົກລົງຂອງອົງການບໍລິຫານລັດຂັ້ນສຸດທ້າຍ ຫລື ໄດ້ຮັບຊາບຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດເປັນຕົ້ນໄປ.

ການແກ້ໄຂຄຳຮ້ອງຂໍຄວາມເປັນທຳຕ້ອງພິຈາລະນາພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງຂໍຄວາມເປັນທຳເປັນຕົ້ນໄປ.

ການຍື່ນຄຳຮ້ອງຂໍຄວາມເປັນທຳ ຕ້ອງຍື່ນຕໍ່ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງຂອງຕົນເສຍກ່ອນ, ຖ້າຄະນະສະມາຊິກສະພາແຫ່ງຊາດ ບໍ່ພິຈາລະນາແກ້ໄຂຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນວັກ 2 ຂອງມາດຕານີ້ແລ້ວ ຜູ້ຮ້ອງຂໍຄວາມເປັນທຳມີສິດຍື່ນຄຳຮ້ອງຂອງຕົນຕໍ່ຄະນະປະຈຳສະພາແຫ່ງຊາດພິຈາລະນາແກ້ໄຂ.

### ມາດຕາ 28. ຜົນສັກສິດຂອງຂໍ້ຕົກລົງ

ຂໍ້ຕົກລົງກ່ຽວກັບການແກ້ໄຂຄຳຮ້ອງຂໍຄວາມເປັນທຳ ທີ່ມີຜົນສັກສິດທາງດ້ານກົດໝາຍມີດັ່ງນີ້:

- ຂໍ້ຕົກລົງກ່ຽວກັບການແກ້ໄຂ ຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ່ມີສິດ ແລະ ໜ້າທີ່ແກ້ໄຂເປັນຂັ້ນທຳອິດ ຊຶ່ງຜູ້ຮ້ອງຂໍຄວາມເປັນທຳ ແລະ ຜູ້ຖືກຮ້ອງຂໍຄວາມເປັນທຳເຫັນດີປະຕິບັດ;
- ຂໍ້ຕົກລົງກ່ຽວກັບການແກ້ໄຂຂອງຄະນະປະຈຳສະພາແຫ່ງຊາດ.

ຂໍ້ຕົກລົງກ່ຽວກັບການແກ້ໄຂຄຳຮ້ອງຂໍຄວາມເປັນທຳ ທີ່ມີຜົນສັກສິດທາງດ້ານກົດໝາຍນັ້ນພະນັກງານທີ່ມີໜ້າທີ່ຮັບຜິດຊອບ ຕ້ອງນຳໄປຈັດຕັ້ງປະຕິບັດຢ່າງທັນການ ແລະ ຖືກຕ້ອງຕາມຂໍ້ຕົກລົງດັ່ງກ່າວ; ບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ຕ້ອງປະຕິບັດຢ່າງເຂັ້ມງວດ.

## ພາກທີ IV
## ການຮັບຕ້ອນຜູ້ຮ້ອງທຸກ

### ມາດຕາ 29. ການຮັບຕ້ອນຜູ້ຮ້ອງທຸກ

ການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ສະຫະພັນນັກຮົບເກົ່າ ແລະອົງການຈັດຕັ້ງສັງຄົມອື່ນ ຕ້ອງມີການຈັດຕັ້ງຮັບຕ້ອນຜູ້ທີ່ມາຍື່ນຄຳຮ້ອງທຸກ, ແຈ້ງຄວາມ ຫລື ລາຍງານກ່ຽວກັບບັນຫາຕ່າງໆທີ່ພົວພັນເຖິງຜົນປະໂຫຍດຂອງລັດ, ລວມໝູ່ ຫລື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ.

ຂະແໜງການຕ່າງໆຕ້ອງຈັດວາງພະນັກງານຂອງຕົນ ເພື່ອຮັບຕ້ອນຜູ້ມາຮ້ອງທຸກ. ສຳລັບຫົວໜ້າຂະແໜງການດັ່ງກ່າວ ກໍຕ້ອງຈັດເວລາຮັບຕ້ອນຜູ້ມາຮ້ອງທຸກດ້ວຍຕົນເອງ ຕາມຄວາມເໝາະສົມ.

### ມາດຕາ 30. ສະຖານທີ່ ແລະເວລາຮັບຕ້ອນຜູ້ຮ້ອງທຸກ

ເພື່ອອຳນວຍຄວາມສະດວກໃຫ້ແກ່ຜູ້ມາຍື່ນຄຳຮ້ອງທຸກ, ແຈ້ງຄວາມ ຫລື ລາຍງານນັ້ນ ຂະແໜງການຕ່າງໆ ຕ້ອງຈັດສະຖານທີ່ຮັບຕ້ອນຢ່າງເໝາະສົມ.

ການຮັບຕ້ອນຜູ້ຮ້ອງທຸກ ໃຫ້ດຳເນີນສະເພາະຢູ່ໃນສະຖານທີ່ ແລະໂມງລັດຖະການ.

## ພາກທີ V
## ຂໍ້ຫ້າມ

### ມາດຕາ 31. ສຳລັບຜູ້ຮ້ອງທຸກ

ຫ້າມຜູ້ຮ້ອງທຸກມີການປະພຶດ ດັ່ງນີ້:

- ຮ້ອງທຸກ ທີ່ບໍ່ມີມູນຄວາມຈິງ;
- ສວຍໃຊ້ການຮ້ອງທຸກ ເພື່ອໃສ່ຮ້າຍປ້າຍສີຜູ້ອື່ນ, ກໍ່ຄວາມບໍ່ສະຫງົບໃນສັງຄົມ;
- ຊື້ຈ້າງຈອບອອຍ, ນາບຂູ່, ປາບປາມ ຜູ້ມີສິດ ແລະ ໜ້າທີ່ແກ້ໄຂຄຳ ຮ້ອງທຸກ.

### ມາດຕາ 32. ສຳລັບຜູ້ຖືກຮ້ອງທຸກ

ຫ້າມຜູ້ຖືກຮ້ອງທຸກມີການປະພຶດ ດັ່ງນີ້:

- ຊື້ຈ້າງຈອບອອຍ, ນາບຂູ່, ໃຊ້ຄວາມຮຸນແຮງ, ປາບປາມ ຜູ້ມີສິດ ແລະ ໜ້າທີ່ແກ້ໄຂຄຳຮ້ອງທຸກ ແລະ ຜູ້ຮ້ອງທຸກ;
- ປົກປິດ, ເຊື່ອງອຳ, ທຳລາຍຂໍ້ມູນ, ຫລັກຖານຕ່າງໆທີ່ກ່ຽວຂ້ອງກັບຄຳຮ້ອງທຸກ.

### ມາດຕາ 33. ສຳລັບຜູ້ທີ່ມີສິດ ແລະ ໜ້າທີ່ແກ້ໄຂ

ຫ້າມຜູ້ທີ່ມີສິດ ແລະ ໜ້າທີ່ແກ້ໄຂຄຳຮ້ອງທຸກ ມີການປະພຶດ ດັ່ງນີ້:

- ມີເຈດຕະນາບໍ່ແກ້ໄຂ, ຮັບສິນບົນ, ທ່ວງດຶງການແກ້ໄຂ ຫລື ແກ້ໄຂໂດຍບໍ່ຖືກຕ້ອງຕາມກົດໝາຍ;
- ປົກປິດ, ເຊື່ອງອຳຂໍ້ມູນ, ຫລັກຖານ ຕ່າງໆທີ່ ກ່ຽວຂ້ອງກັບຄຳຮ້ອງທຸກ;
- ເປີດເຜີຍຄວາມລັບກ່ຽວກັບຜູ້ຮ້ອງທຸກເຊັ່ນ: ຊື່ ແລະ ນາມສະກຸນ, ທີ່ຢູ່, ນາມປາກກາ ໃນກໍລະນີທີ່ມີຄວາມຈຳເປັນຕ້ອງປິດລັບ.

### ມາດຕາ 34. ສຳລັບບຸກຄົນ ແລະ ການຈັດຕັ້ງອື່ນ

ຫ້າມບຸກຄົນ ແລະການຈັດຕັ້ງອື່ນ ມີການປະພຶດດັ່ງນີ້:

- ຍຸແຍ່, ຊວນເຊື່ອ ຫລື ຊື້ຈ້າງຈອບອອຍໃຫ້ຜູ້ອື່ນທຳການຮ້ອງທຸກທີ່ບໍ່ມີມູນຄວາມຈິງ;
- ແຊກແຊງ, ນາບຂູ່ ຜູ້ມີສິດ ແລະ ໜ້າທີ່ແກ້ໄຂຄຳຮ້ອງທຸກ;
- ປົກປິດ, ເຊື່ອງອຳ ຫລື ທຳລາຍຂໍ້ມູນ, ຫລັກຖານ ກ່ຽວກັບຄຳຮ້ອງທຸກ;
- ນາບຂູ່, ໃຊ້ຄວາມຮຸນແຮງ, ປາບປາມຜູ້ຮ້ອງທຸກ ຫລື ຜູ້ຖືກຮ້ອງທຸກ;
- ປົກປິດ, ເຊື່ອງອຳ ຜູ້ຖືກຮ້ອງທຸກ.

# ພາກທີ VI
# ການຄຸ້ມຄອງການແກ້ໄຂຄຳຮ້ອງທຸກ

**ມາດຕາ 35. ວຽກງານຄຸ້ມຄອງການແກ້ໄຂຄຳຮ້ອງທຸກ**

ວຽກງານຄຸ້ມຄອງການແກ້ໄຂຄຳຮ້ອງທຸກ ມີດັ່ງນີ້:

1. ປະກາດໃຊ້ນິຕິກຳຕ່າງໆ ກ່ຽວກັບການແກ້ໄຂຄຳຮ້ອງທຸກ;
2. ເຜີຍແຜ່,ແນະນຳ ແລະ ຈັດຕັ້ງປະຕິບັດລະບຽບກົດໝາຍຕ່າງໆ ທີ່ພົວພັນເຖິງການແກ້ໄຂຄຳຮ້ອງທຸກ;
3. ກວດກາ, ກວດການ ການປະຕິບັດລະບຽບກົດຫມາຍກ່ຽວກັບການແກ້ໄຂຄຳຮ້ອງທຸກ;
4. ສັງລວມສະພາບການກ່ຽວກັບຄຳຮ້ອງທຸກແລະການແກ້ໄຂຄຳຮ້ອງທຸກ;
5. ສະຫລຸບ, ຖອດຖອນບົດຮຽນກ່ຽວກັບວຽກງານແກ້ໄຂຄຳຮ້ອງທຸກ;
6. ລາຍງານການຈັດຕັ້ງຂັ້ນເທິງ ທີ່ກ່ຽວຂ້ອງ.

**ມາດຕາ 36. ອົງການຄຸ້ມຄອງການແກ້ໄຂຄຳຮ້ອງທຸກ**

ອົງການຄຸ້ມຄອງການແກ້ໄຂຄຳຮ້ອງທຸກ ປະກອບດ້ວຍ :

- ສະພາແຫ່ງຊາດ;
- ອົງການບໍລິຫານລັດ;
- ສານ;
- ອົງການໄອຍະການ.

**ມາດຕາ 37. ສະພາແຫ່ງຊາດ**

ສະພາແຫ່ງຊາດ ຄຸ້ມຄອງການແກ້ໄຂຄຳຮ້ອງຂໍຄວາມເປັນທຳຢູ່ໃນຂອບເຂດທົ່ວປະເທດ ຊຶ່ງແມ່ນຫ້ອງການສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ເປັນເສນາທິການໃຫ້ແກ່ຄະນະສະມາຊິກສະພາແຫ່ງຊາດ ແລະ ຫ້ອງວ່າການສະພາແຫ່ງຊາດເປັນເສນາທິການໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ ໃນການແກ້ໄຂຄຳຮ້ອງຂໍຄວາມເປັນທຳ.

**ມາດຕາ 38. ອົງການບໍລິຫານລັດ**

ລັດຖະບານຄຸ້ມຄອງຢ່າງລວມສູນ, ເປັນເອກະພາບກ່ຽວກັບການແກ້ໄຂຄຳສະເໜີໃນຂອບເຂດທົ່ວປະເທດ.

ອົງການກວດກາແຫ່ງລັດຂັ້ນສູນກາງເປັນເສນາທິການ ແລະ ຮັບຜິດຊອບຕໍ່ລັດຖະບານ ໃນການຄຸ້ມຄອງການແກ້ໄຂຄຳສະເໜີໃນຂອບເຂດສິດ ແລະ ໜ້າທີ່ຂອງລັດຖະບານ.

ກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນຄຸ້ມຄອງການແກ້ໄຂຄຳສະເໜີ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

ອົງການກວດກາລັດຂັ້ນກະຊວງ ແລະ ຂັ້ນທ້ອງຖິ່ນ ເປັນເສນາທິການໃຫ້ແກ່ອົງການຈັດຕັ້ງລັດຂັ້ນຂອງຕົນ ໃນການຄຸ້ມຄອງການແກ້ໄຂຄຳສະເໜີ.

**ມາດຕາ 39. ສານ ແລະອົງການໄອຍະການ**

ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ ຄຸ້ມຄອງການແກ້ໄຂຄຳຮ້ອງຟ້ອງໃນຂອບເຂດທົ່ວປະເທດ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ.

ສານ, ອົງການໄອຍະການ ຄຸ້ມຄອງການແກ້ໄຂຄຳຮ້ອງຟ້ອງຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ.

**ມາດຕາ 40. ການປະສານສົມທົບ ແລະລາຍງານ**

ໃນກໍລະນີທີ່ເຫັນວ່າມີຄວາມຈຳເປັນ ຄະນະປະຈຳສະພາແຫ່ງຊາດອາດຈະເຊີນນາຍົກລັດຖະມົນຕີ, ປະທານສານປະຊາຊົນສູງສຸດ, ໄອຍະການປະຊາຊົນສູງສຸດ ມາປຶກສາຫາລືກ່ຽວກັບການແກ້ໄຂຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງ ຫລື ການຈັດຕັ້ງ; ນາຍົກລັດຖະມົນຕີອາດຈະເຊີນປະທານສານປະຊາຊົນສູງສຸດ, ໄອຍະການປະຊາຊົນສູງສຸດ ມາປຶກສາຫາລືກ່ຽວກັບການແກ້ໄຂຄຳສະເໜີຂອງພົນລະເມືອງ ຫລື ການຈັດຕັ້ງ.

ລັດຖະບານ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ ລາຍງານຕໍ່ກອງປະຊຸມສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ ແລະ ປະທານປະເທດ ກ່ຽວກັບການແກ້ໄຂຄຳສະເໜີ ແລະ ຄຳຮ້ອງຟ້ອງຕາມລະບຽບການ; ຄະນະປະຈຳສະພາແຫ່ງຊາດລາຍງານຕໍ່ກອງປະຊຸມສະພາແຫ່ງຊາດ ກ່ຽວກັບການແກ້ໄຂຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງ ຫລື ການຈັດຕັ້ງ.

ຫົວໜ້າອົງການກວດກາແຫ່ງລັດຂັ້ນສູນກາງ ລາຍງານຕໍ່ລັດຖະບານເປັນແຕ່ລະໄລຍະກ່ຽວກັບການແກ້ໄຂຄຳສະເໜີ.

ໃນກໍລະນີທີ່ເຫັນວ່າມີຄວາມຈຳເປັນ ຫົວໜ້າຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ອາດຈະເຊີນປະທານສານປະຊາຊົນ, ໄອຍະການປະຊາຊົນຂັ້ນທ້ອງຖິ່ນ ແລະພາກສ່ວນອື່ນທີ່ກ່ຽວຂ້ອງ ມາປຶກສາຫາລືກ່ຽວກັບການແກ້ໄຂຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງ ຫລື ການຈັດຕັ້ງ; ເຈົ້າແຂວງ, ເຈົ້າຄອງນະຄອນ, ເຈົ້າເມືອງ, ຫົວໜ້າເທດສະບານ ອາດຈະເຊີນປະທານສານປະຊາຊົນ, ໄອຍະການປະຊາຊົນຂັ້ນດຽວກັນ ມາປຶກສາຫາລືກ່ຽວກັບການແກ້ໄຂຄຳສະເໜີຂອງພົນລະເມືອງ ຫລື ການຈັດຕັ້ງ.

ການແກ້ໄຂຄຳສະເໜີ ແລະ ຄຳຮ້ອງຟ້ອງຢູ່ທ້ອງຖິ່ນ ຕ້ອງປະຕິບັດລະບອບລາຍງານໃຫ້ຂັ້ນເທິງຂອງຕົນ ແລະ ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງຕາມລະບຽບການ; ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ຕ້ອງລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດກ່ຽວກັບການແກ້ໄຂຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງ ຫລື ການຈັດຕັ້ງ.

## ພາກທີ VII

## ການຕິດຕາມກວດກາ ແລະການເຂົ້າຮ່ວມໃນການແກ້ໄຂຄຳຮ້ອງທຸກ

## ໝວດທີ 1
## ການຕິດຕາມກວດກາຂອງສະພາແຫ່ງຊາດ

**ມາດຕາ 41. ການຕິດຕາມກວດກາຂອງສະພາແຫ່ງຊາດ**

ການຕິດຕາມກວດກາຂອງສະພາແຫ່ງຊາດ ກ່ຽວກັບການແກ້ໄຂຄຳຮ້ອງທຸກ ໃຫ້ປະຕິບັດຕາມມາດຕາ 15, 24, 38 ແລະ ມາດຕາ 46 ຂອງກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ.

**ມາດຕາ 42. ພັນທະຂອງບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ**

ບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ມີພັນທະໃນການສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ແກ່ສະພາແຫ່ງຊາດ ໃນການຕິດຕາມກວດກາການແກ້ໄຂຄຳຮ້ອງທຸກ.

## ໝວດທີ 2
## ການເຂົ້າຮ່ວມໃນການແກ້ໄຂຄຳຮ້ອງທຸກ ຂອງອົງການຈັດຕັ້ງທີ່ກ່ຽວຂ້ອງ

**ມາດຕາ 43. ພັນທະເຂົ້າຮ່ວມ**

ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ສະຫະພັນນັກຮົບເກົ່າ ແລະ ອົງການຈັດຕັ້ງສັງຄົມອື່ນ ມີພັນທະເຂົ້າຮ່ວມໃນການແກ້ໄຂຄຳຮ້ອງທຸກ ຕາມພາລະບົດບາດຂອງຕົນ ດັ່ງນີ້:

1. ຮັບ, ຄົ້ນຄວ້າຄຳຮ້ອງທຸກ, ໃຫ້ຄຳປຶກສາ ແລະ ຄຳແນະນຳແກ່ຜູ້ຮ້ອງທຸກ;
2. ດຳເນີນການໄກ່ເກ່ຍ ຂໍ້ຂັດແຍ່ງ ໃນເມື່ອມີເງື່ອນໄຂ;
3. ສົ່ງສຳນວນເອກະສານຄຳຮ້ອງທຸກ ທີ່ຕົນໄດ້ຮັບໄປຍັງອົງການທີ່ມີສິດ ແລະ ໜ້າທີ່ແກ້ໄຂຄຳຮ້ອງທຸກ, ຖ້າເຫັນວ່າບໍ່ສາມາດໄກ່ເກ່ຍໄດ້ ແລະ ບໍ່ຢູ່ໃນສິດ ແລະ ໜ້າທີ່ແກ້ໄຂຂອງຕົນ;
4. ເຂົ້າຮ່ວມໃນການແກ້ໄຂຄຳຮ້ອງທຸກ ຕາມຄຳເຊີນຂອງອົງການບໍລິຫານລັດ, ສານ, ອົງການໄອຍະການ ຫລື ສະພາແຫ່ງຊາດ;
5. ເຂົ້າຮ່ວມໃນການຕິດຕາມກວດກາການແກ້ໄຂຄຳຮ້ອງທຸກ ຕາມຄຳເຊີນຂອງສະພາແຫ່ງຊາດ.

**ມາດຕາ 44. ສິດໃນການເຂົ້າຮ່ວມ**

ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ສະຫະພັນນັກຮົບເກົ່າ ແລະ ອົງການຈັດຕັ້ງສັງຄົມອື່ນມີສິດໃນການເຂົ້າຮ່ວມ ດັ່ງນີ້:

1. ເຂົ້າຮ່ວມ ແລະ ຕິດຕາມກວດກາການແກ້ໄຂຄໍາຮ້ອງທຸກ ທີ່ພົວພັນເຖິງພາລະບົດບາດຂອງຕົນ;
2. ຮັບການຮ້ອງທຸກຂອງພົນລະເມືອງ ຫລື ການຈັດຕັ້ງກ່ຽວກັບການລະເມີດລະບຽບກົດໝາຍ;
3. ຮຽກ, ເຊີນບຸກຄົນ ຫລື ການຈັດຕັ້ງທີ່ກ່ຽວຂ້ອງ ມາໃຫ້ຄວາມກະຈ່າງແຈ້ງກ່ຽວກັບການລະເມີດລະບຽບກົດໝາຍ;
4. ສະເໜີໃຫ້ອົງການທີ່ກ່ຽວຂ້ອງ ພິຈາລະນາແກ້ໄຂຢ່າງທັນການກ່ຽວ ກັບການລະເມີດລະບຽບກົດໝາຍ;
5. ຮັບຊາບຜົນຂອງການແກ້ໄຂຄໍາຮ້ອງທຸກຕາມການສະເໜີຂອງຕົນຈາກອົງການທີ່ກ່ຽວຂ້ອງ.

## ພາກທີ VIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 45. ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ ຫລື ການຈັດຕັ້ງທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍວ່າດ້ວຍ ການແກ້ໄຂຄໍາຮ້ອງທຸກ ຈະໄດ້ຮັບການຍ້ອງຍໍ ຫລື ປະຕິບັດນະໂຍບາຍອື່ນຕາມລະບຽບການ.

### ມາດຕາ 46. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ຫລື ການຈັດຕັ້ງທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກປະຕິບັດມາດຕະການຕ່າງໆເຊັ່ນ: ກ່າວເຕືອນ, ປະຕິບັດວິໄນ, ປັບໃໝ ຫລື ມາດຕະການທາງອາຍາ ແລ້ວແຕ່ກໍລະນີເບົາ ຫລື ໜັກ ລວມທັງການໃຊ້ແທນຄ່າເສຍຫາຍທີ່ ຕົນໄດ້ກໍ່ຂຶ້ນ.

## ພາກທີ IX
## ບົດບັນຍັດສຸດທ້າຍ

### ມາດຕາ 47. ການຈັດຕັ້ງປະຕິບັດ

ຄະນະປະຈໍາສະພາແຫ່ງຊາດ, ລັດຖະບານ, ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

### ມາດຕາ 48. ຜົນສັກສິດ

ກົດໝາຍສະບັບນີ້ມີຜົນສັກສິດພາຍຫລັງ ຫົກສິບວັນ ນັບແຕ່ວັນປະທານປະເທດແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ